ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 13 ຫາ 17 ພະຈິກ 2023



ການປູກ ແລະ ບົວລະບັດ ຕົ້ນສີດາ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ການປູກ ແລະ ບົວລະບັດ ຕົ້ນສີດາ

**1. ການກຽມດິນ**

- ກຽມຂຸມປູກຂະໜາດ 50 x 50 ຊັງຕີແມັດ

- ປະສົມດິນກັບຝຸ່ນອິນຊີ ອັດຕາ 1:2 (ດິນ 1 ສ່ວນ, ຝຸ່ນອິນຊີ 2 ສ່ວນ) ໃຫ້ເຂົ້າກັນເປັນຢ່າງດີແລ້ວ ໃສ່ລົງໃນຂຸມປູກໜາປະມານ 10 ຊັງຕີແມັດ.

**2. ຂັ້ນຕອນການປູກ**

- ກຽມຕົ້ນພັນ ທີ່ໄດ້ມາຈາກການການງ່າ ຫຼື ປັກຊຳ ໂດຍຄັດເລືອກເອົາ ຕົ້ນທີ່ຄວາມສົມບູນ.

- ເອົາຕົ້ນພັນລົງໃນຂຸມ ໂດຍການໃຊ້ມີດປາດ ຖົງຈາກກົ້ນຖົງທັງ 2 ຂ້າງ ຊ້າຍ ແລະ ຂວາ ດຶງຖົງ ປູກອອກ ໂດຍລະວັງບໍ່ໃຫ້ກ້ອນເບົ້າດິນແຕກ ຖົ່ມ ດິນທີ່ເຫຼືອລົງໃນຂຸມກົດດິນບໍລິເວນເຫງົ້າໃຫ້ແໜ້ນ.

- ໃຊ້ຫຼັກ ແລະ ມັດຕົ້ນສີດາໄວ້ເພື່ອປ້ອງກັນ ຕົ້ນລົ້ມແລ້ວຫົດນ້ຳໃຫ້ຊຸ່ມ.

- ເຮັດຮົ່ມເງົາບັງແດດໃຫ້ຕົ້ນສີດາທີ່ປູກໃໝ່ ຈົນກວ່າຕົ້ນຈະຕັ້ງໂຕໄດ້.

ການປູກໃນພື້ນທີ່ 1 ໄລ່ ສາມາດປູກໄດ້ ປະມານ 102-150 ຕົ້ນ ໂດຍປູກໄລຍະຫ່າງທີ່ປູກ ເໝາະສົມ ຄືຂະໜາດ 3 x 4 ແມັດ.

**3. ການບົວລະບັດຮັກສາ ແລະ ເກັບກ່ຽວຜົນຜະລິດ**

▶ ຄວນແບ່ງການໃສ່ປຸ໋ຍອອກເປັນ 3 ໄລຍະຄື:

1.) ໄລຍະບຳລຸງຕົ້ນ ໃນຊ່ວງປູກຈົນຮອດໄລຍະອອກດອກຮຸ່ນທຳອິດ ໃສ່ປຸ໋ຍຫຼັງເກັບກ່ຽວຜົນຜະລິດໂດຍໃຊ້ສູດ 12-12-0 ໃນອັດຕາສ່ວນຝຸ່ນຄອກຕໍ່ຝຸ່ນເຄມີ 10:1 ອັດຕາ 0,5 ກິໂລກຼາມ/ຕົ້ນ ປະມານ 1-2 ຄັ້ງ.

2.) ໄລຍະບຳລຸງໝາກ ໃສ່ປຸ໋ຍເມື່ອຕົ້ນສີດາ ມີໝາກຕິດໜ່ວຍນ້ອຍໆ ໂດຍໃສ່ປຸ໋ຍ ສູດ 15-15-15 ແລະ ປຸ໋ຍໝັກ ໃນອັດຕາດຽວກັນ.

3.) ໄລຍະປັບປຸງຄຸນນະພາບ ໃສ່ປຸ໋ຍກ່ອນການເກັບກ່ຽວ 1 ເດືອນ ຕາມລຳດັບ ດ້ວຍສູດ 13-13-21 ຫຼື 12-12-17

▶ ການຫົດນ້ຳ: ເມື່ອປູກໝາກສີດາແລ້ວຕ້ອງ



ຫົດນ້ຳໃນໄລຍະທຳອິດຢ່າງສະໝ່ຳສະເໝີຈົນຕົ້ນສີດາທີ່ປູກຕັ້ງຕົ້ນໄດ້, ຈາກນັ້ນ ໃຫ້ສັງເກດເບິ່ງຄວາມຊຸ່ມຂອງດິນ ຖ້າດິນແຫ້ງຫຼາຍຕ້ອງຟ້າວໃຫ້ນ້ຳ ແລະ ຖ້າຝົນຕົກຫຼາຍຄວນລະບາຍນ້ຳອອກ ຄວນເວັ້ນໄລຍະການໃຫ້ນ້ຳເວລາຕົ້ນສີດາອອກດອກ ເມື່ອເລີ່ມຕິດໝາກແລ້ວຄວນຄ່ອຍໆໃຫ້ນ້ຳເພີ່ມຂຶ້ນ ຕາມຄວາມຕ້ອງການຂອງຕົ້ນສີດາ.

▶ ການຕັດແຕ່ງກິ່ງງ່າ: ເພື່ອຮັກສາຂະໜາດໝາກໃຫ້ໃຫຍ່ຢູ່ສະເໝີ ແລະ ເຮັດໃຫ້ຜົນຜະລິດທີ່ແນ່ນອນ ເພາະຖ້າງ່າສີດາເຖົ້າ (ອາຍຸເກີນ 3 ປີ) ໝາກຈະນ້ອຍລົງ. ດັ່ງນັ້ນ, ຄວນຕັດແຕ່ງກິ່ງງ່າຕົ້ນສີດາທຸກໆປີ ຈະຊ່ວຍເຮັດໃຫ້ໝາກສີດາ ແຕກກິ່ງອ່ອນ ແລະ ມີຊໍ່ດອກອອກມານຳ. ນອກຈາກນີ້, ຍັງຈະຊ່ວຍເຮັດໃຫ້ຕົ້ນສີດາເປັນຊົງຝຸ່ມສວຍງາມແສງແດດສ່ອງເຖິງ, ສຳລັບການປິດໝາກເພື່ອຮັກສາຄຸນນະພາບໝາກໃຫ້ໃຫຍ່ ຄວນປິດໝາກອອກ ໃຫ້ເຫຼືອໝາກໜຶ່ງຕໍ່ງ່າໂດຍເລືອກເອົາໝາກທີ່ສົມບູນໄວ້.

▶ ການຫໍ່ໝາກ: ເພື່ອປ້ອງກັນແມງວັນໝາກໄມ້ ແລະ ຮັກສາເປືອກໝາກສີດາໃຫ້ງາມ ໂດຍເລີ່ມຫໍ່ໝາກສີດາ ເມື່ອມີຂະໜາດຊຳໝາກນາວ ຫຼື ຫຼັງດອກບານແລ້ວ 1 ເດືອນ, ໃຊ້ຖົງຢາງໃສ່ມັດປາກຖົງກັບຂອັ້ນໝາກສີດາ ແລ້ວຈຶ່ງໃຊ້ເຈ້ຍໜັງສືພິມຫໍ່ຖັບອີກເທື່ອໜຶ່ງເພື່ອປ້ອງກັນແສງແດດ.

▶ ການເກັບໝາກ: ຄວນເກັບໝາກທີ່ແກ່ໂດຍນັບຕັ້ງແຕ່ດອກບານຈົນເຖິງແກ່ເກັບກ່ຽວໃຊ້ເວລາປະມານ 4-6 ເດືອນ ໂດຍສັງເກດຈາກລັກສະນະຂອງໝາກຈາກສີຂຽວ ຈະກາຍເປັນສີຂາວນວນ, ໝາກຕຶ່ງ, ເຫຼື້ອມ, ການເກັບກ່ຽວແມ່ນໃຊ້ມີດຄັດເຕີຕັດໃຫ້ຕິດກັບຂອັ້ນໝາກ, ແລ້ວນຳເຂົ້າບ່ອນຮົ່ມແກະຖົງຫໍ່ໝາກອອກແລ້ວນຳຫຸ້ມຫໍ່ເພື່ອກຽມພ້ອມຈຳໜ່າຍ.

ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສິງຄານ
ທ່ານ ສີສະຫວາດ ທອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພິມມະຈັນ
ທ່ານ ໂຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳມອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;